**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

-----------------------------

**ນະຄອນຫລວງວຽງຈັນ**

**ອົງການປົກຄອງ**

ເລກທີ 03 /ອປຄ.ນວ.

ວັນທີ 25 ກັນຍາ 2015.

# ມະຕິຕົກລົງ
# ຂອງອົງການປົກຄອງນະຄອນຫລວງວຽງຈັນ
# ກ່ຽວກັບແຜນວຽກ ແລະ ມາດຕະການຈັດຕັ້ງປະຕິບັດ ໂຄງການວຽງຈັນສະອາດ
# ໄລຍະສະເພາະຫນ້າ ແລະ ຮອດປີ 2020

- ອີງຕາມ ມາດຕາ 7 ວ່າດ້ວຍພາລະບົດບາດ ຂອງອົງການປົກຄອງທ້ອງຖິ່ນ ທີ່ກໍານົດໄວ້ໃນກົດຫມາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 03/ສພຊ, ລົງວັນທີ 21 ຕຸລາ 2003.
- ອີງຕາມມະຕິຂອງກອງປະຊຸມໃຫຍ່ ຄັ້ງທີ VI ຂອງອົງຄະນະພັກ ນະຄອນວຽງຈັນວາງອອກ(ວິໃສທັດຂໍ້ທີ 5 ແລະ ຍຸດທະສາດຂໍ້ທີ 3)ກ່ຽວກັບການພັດທະນານະຄອນຫລວງວຽງຈັນ.
- ອີງຕາມຫນັງສືສະເຫນີຂອງອົງການພັດທະນາ ແລະ ບໍລິຫານຕົວເມືອງວຽງຈັນ ສະບັບເລກທີ 564/ອພບ, ລົງວັນທີ 16/12/2014.
- ອີງຕາມມະຕິກອງປະຊຸມຄະນະພັກນະຄອນຫລວງວຽງຈັນເປີດກວ້າງປະຈໍາເດືອນ ຕຸລາ 2015.

## ອົງການປົກຄອງນະຄອນຫລວງວຽງຈັນ ຕົກລົງ :

**ມາດຕາ 1** : ປະກາດໃຊ້ແຜນວຽກ ແລະ ມາດຕະການຮັບປະກັນວຽງຈັນສະອາດ ທົ່ວນະຄອນຫຼວງວຽງຈັນ ຢ່າງເປັນເອກະພາບ ນັບແຕ່ວັນທີ 1 ພະຈິກ 2015 ເປັນຕົ້ນໄປ.

**ມາດຕາ 2: ຈຸດປະສົງຄາດຫມາຍຂອງໂຄງການວຽງຈັນສະອາດແມ່ນ:**

**2.1.** ການສ້າງນະຄອນວຽງຈັນ ໃຫ້ເປັນເມືອງສະອາດ ແມ່ນເປັນຄວາມຈໍາເປັນພາວະວິໄສ, ເປັນຄວາມຮຽກຮ້ອງຕ້ອງການອັນຮີບດ່ວນ ເພື່ອຍົກສູງພາບພົດບົດບາດຂອງນະຄອນວຽງຈັນ ໃຫ້ໂດດເດັ່ນໃນຖານະເປັນເມືອງຫລວງຂອງປະເທດ ທັງເປັນການສືບຕໍ່ຜົນສໍາເລັດຂອງການສະເຫຼີມສະຫຼອງວຽງຈັນເປັນນະຄອນຫຼວງ ຄົບຮອບ 450 ປີ (2010).

**2.2.** ເພື່ອຊີ້ໃຫ້ເຫັນເຖິງພັນທະຫນ້າທີ່ ແລະ ຄວາມຮັບຜິດຊອບ ໂດຍກົງ ຂອງທຸກພາກສ່ວນ ແລະ ຂອງພົນລະເມືອງທຸກຄົນ ທີ່ດໍາລົງຊີວິດ ຢູ່ນະຄອນຫລວງ , ຊຶ່ງຕາມຈິດໃຈມະຕິ ຄັ້ງທີ VI ຂອງອົງຄະນະພັກ

ຊາວນະຄອນວຽງຈັນຕ້ອງເພີ່ມທະວີຄວາມສາມັກຄີຮ່ວມມື ຕາມຄຳຂວັນ 5 ຮ່ວມຂອງນະຄອນວຽງຈັນ: (ຮ່ວມຢູ່ນະຄອນວຽງຈັນ, ຮ່ວມປົກປັກຮັກສາ, ຮ່ວມແກ້ໄຂບັນຫາ, ຮ່ວມສ້າງສາພັດທະນາ ແລະ ຮ່ວມກ້າວໄປໜ້າ ສູ່ຄວາມຈະເລີນວັດທະນາ ກັບນະຄອນຫລວງ).

2.3. ເພື່ອຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ຜູ້ແທນ ຄັ້ງທີ VI ຂອງ ອົງຄະນະພັກ ແລະ ຄຳເຫັນຊີ້ນຳຂອງສະຫາຍເລຂາທິການໃຫຍ່, ປະທານປະເທດ ຕໍ່ກອງປະຊຸມໃຫຍ່ດັ່ງກ່າວ ກ່ຽວກັບການພັດທະນາຕົວເມືອງວຽງຈັນ ໄລຍະສະເພາະໜ້າ, ໂດຍສະເພາະຮອດປີ 2020, ຊຶ່ງຖືເອົາໂຄງການ ວຽງຈັນສະອາດ, ນຳເອົານະຄອນຫລວງວຽງຈັນ ໃຫ້ຫລຸດພົ້ນອອກຈາກສະຖານະພາບຄວາມດ້ອຍພັດທະນາ ແລະ ເປັນຕົວເມືອງທີ່ໜ້າຢູ່ (6 ສ), ສ້າງບາດກ້າວທີ່ດີໃຫ້ແກ່ການເຊື່ອມໂຍງກັບສາກົນ ກ້າວຂຶ້ນເປັນຕົວເມືອງທີ່ມີການພັດທະນາທັນສະໄໝ ແລະ ຍົກລະດັບການດຳລົງຊີວິດຂອງຊາວເມືອງ ໃຫ້ມີຄຸນນະພາບນັບມື້ນັບດີຂຶ້ນນັ້ນແມ່ນໜ້າທີ່ສຳຄັນຂາດບໍ່ໄດ້ຂອງຄົນເມືອງຫຼວງ.

2.4. ບັນຫາສະເພາະໜ້ານີ້ແມ່ນເພື່ອກະກຽມສະເຫລີມສະຫລອງ ແລະ ສ້າງຄວາມເອກອ້າງທະນົງໃຈ ໃຫ້ວັນປະຫວັດສາດສຳ ຄັນຂອງພັກ, ຂອງຊາດ ແລະ ກອງປະຊຸມສາກົນທີ່ຈະມາເຖິງ ຄື: ວັນສະຖາປະນາສາທາລະນະລັດປະຊາທິປະໄຕປະຊາຊົນລາວ ຄົບຮອບ 40 ປີ (ວັນທີ 2/12/1975 ເຖິງ ວັນທີ 2/12/2015), ກອງປະຊຸມໃຫຍ່ ຄັ້ງທີ X ຂອງ ພັກ ແລະ ການເປັນເຈົ້າພາບຈັດກອງປະຊຸມສຸດຍອດອາຊຽນ ຄັ້ງທີ 28 ແລະ ກອງປະຊຸມເຈົ້າຄອງນະຄອນຫຼວງອາຊຽນ ແລະ ຄູ່ຮ່ວມ ໃນປີ 2016.

**ມາດຕາ 3 : ແຜນວຽກ ແລະ ມາດຕະການຕົ້ນຕໍ ຂອງໂຄງການຮັບປະກັນວຽງຈັນສະອາດ**

ໂຄງການວຽງຈັນສະອາດໄດ້ກຳນົດໄວ້ແລ້ວໃນຄູ່ມືເອກະສານ 6 ສ ( ປຶ້ມວຽງຈັນ 450 ປີ, ໜ້າ 464 ), ຊຶ່ງໃນນັ້ນປະກອບດ້ວຍ : ເສັ້ນທາງ, ເຄຫະສະຖານ, ພາຫະນະຂົນສົ່ງ, ສາທາລະນຸປະໂພຍດ, ໂຮງຈັກໂຮງງານ, ການບໍລິໂພກ, ນ້ຳ ແລະ ທ້ອງຟ້າອາກາດສະອາດ.

3.1. **ແຜນວຽກ ແລະ ມາດຕະການເສັ້ນທາງສະອາດ ມີດັ່ງນີ້ :**

- **ຕົວຊີ້ວັດຂອງເສັ້ນທາງສະອາດ :**

+ ບໍ່ໃຫ້ມີຂີ້ຝຸ່ນ, ບໍ່ໃຫ້ມີຂີ້ເຫຍື້ອ ແລະ ບໍ່ໃຫ້ມີນ້ຳເປື້ອນ ຕາມເສັ້ນທາງ ແລະ ຂອບທາງ

+ ໜ້າຖະໜົນຫົນທາງ , ອ້ອມແອ້ມແຄມທາງ ຢູ່ໃນສະຖານະພາບປົກກະຕິດີ (ໜ້າທາງບໍ່ເປັນຂຸມ)

+ ຂອບທາງພາຍໃນຕົວເມືອງ ເປັນຕົ້ນ: ຖະໜົນຫຼວງແຫ່ງຊາດ, ຖະໜົນນະຄອນວຽງຈັນ, ເສັ້ນທາງໃຫຍ່, ກາງ, ທາງຄົນຍ່າງບໍ່ມີສິ່ງກີດຂວາງ.

- **ແຜນວຽກຕົ້ນຕໍ**

+ <u>ບູລິມະສິດທີ 1</u>: ຈັດຕັ້ງປະຕິບັດໃນ 21 ເສັ້ນທາງໃຈກາງຕົວເມືອງ ປະກອບມີ : ຖະໜົນສຸພານຸວົງ+ຖະໜົນຫລວງພະບາງ(ສາມແຍກສີໄຄ-ໄຟແດງວັດອິນແປງ), ຖະໜົນເສດຖາທິລາດ, ຖະໜົນສາມແສນໄທ, ຖະໜົນຟ້າງຸ່ມ, ຖະໜົນລ້ານຊ້າງ, ຖະໜົນອາຊຽນ, ຖະໜົນທ່າເດື່ອ, ຖະໜົນ ກຳແພງເມືອງ, ຖະໜົນລາວ-ໄທ, ຖະໜົນກົດສໂກ-ໂພນໄຊ, ຖະໜົນໂພນທັນ, ຖະໜົນ ດົງປ່າລານ -ສາຍລົມ, ຖະໜົນຂຸນບູລົມ, ຖະໜົນຄູວຽງ, ຖະໜົນໂພນຕ້ອງຈອມມະນີ - ດົງໂດກ, ຖະໜົນ P 3 (ປະຕູໄຊ-ສາມແຍກຄ້ອຍໂຮງໝໍ150ຕຽງ), ຖະໜົນ 23 ສິງຫາ, ຖະໜົນໜອງບອນ, ຖະໜົນເຈົ້າອານຸວົງ, ຖະໜົນແຄມ ຂອງ(ໄຟແດງໂຮງຮຽນການຊ່າງລາວເຢຍລະມັນ-ສາມແຍກປາກປ່າສັກ) ແລະ ຖະໜົນໄກສອນພົມວິຫານ ລວມຄວາມຍາວ 90,212 ແມັດ ໃຫ້ບັນລຸຕາມມາດຖານຄວາມສະອາດ ແລະ ຕາມຕົວຊີ້ວັດໃນລະດັບສູງ 90%;

+ ບູລິມະສິດທີ 2 : ເຮັດໃຫ້ທຸກຖະໜົນຫຼວງແຫ່ງຊາດໃນຂອບເຂດນະຄອນຫຼວງ: ຖະ ໜົນ 13 ເໜືອ, 13 ໃຕ້, ເສັ້ນທາງເລກທີ 10, ທາງເລກທີ 11, ຖະໜົນຫຼວງແຫ່ງຊາດ ໃຫ້ມີຄວາມສະອາດຕາມ ມາດຖານ ແລະ ຕົວຊີ້ວັດໂດຍພື້ນຖານ 80% ;

+ ບູລິມະສິດທີ 3 : ເຮັດໃຫ້ທຸກເສັ້ນທາງໃນເທດສະບານນະຄອນຫລວງວຽງຈັນ, ທາງຊອຍທາງຮ່ອມ ທີ່ສຳຄັນໃນເທດສະບານ ແລະ ທາງຊອຍທາງຮ່ອມ ໃນຂອບເຂດນະຄອນຫຼວງ ຮັບປະກັນຄວາມສະອາດ 70%.

**- ມາດຕະການຈັດຕັ້ງປະຕິບັດຮັບປະກັນໃຫ້ເສັ້ນທາງສະອາດ :**

+ ໃຫ້ປັດກວາດ 21 ເສັ້ນທາງ ມີຄວາມຍາວ 90,212 ແມັດ, ຕ້ອງໄດ້ນຳໃຊ້ແຮງງານຄົນຈຳນວນ 476 ຄົນ, ດູດຝຸ່ນ ລ້າງທາງດ້ວຍກົນຈັກ 4ຄັ້ງ/ເດືອນ/ເສັ້ນທາງ ແລະ ເກັບມ້ຽນຂີ້ເຫຍື້ອຄົວເຮືອນ 2 ຄັ້ງ/ອາທິດ ສະເພາະຂີ້ເຫຍື້ອ ຕະຫລາດ, ຮ້ານອາຫານ ແລະ ໂຮງແຮມ ເກັບທຸກມື້ ແລະ ຂີ້ເຫຍື້ອສາທາລະນະເກັບມ້ຽນ 2 ຖ້ຽວ/ມື້

+ ລະດົມທຶນທົ່ວສັງຄົມເພື່ອໃຊ້ຈ່າຍເຂົ້າໃນການຮັກສາເສັ້ນທາງສະອາດໃຫ້ໄດ້ຈຳນວນ 895,000,000 ກີບ/ເດືອນ, (ໃນນັ້ນ: ຄ່າແຮງງານປັດກວາດດ້ວຍແຮງງານຄົນ 476 ລ້ານ ກີບ/ເດືອນ, ຄ່າເກັບມ້ຽນ ຂີ້ເຫຍື້ອສາທາລະນະ 42 ລ້ານກີບ/ເດືອນ ແລະ ຄ່າອານາໄມທາງດ້ວຍກົນຈັກ (ດູດຝຸ່ນ, ລ້າງທາງ) 377 ລ້ານ ກີບ/ເດືອນ), ຊຶ່ງມາຈາກ :

- ງົບປະມານຂອງລັດໃນແຕ່ລະປີ ມູນຄ່າ 2 ຕື້ກີບ x 11% ອັດຕາການເຕີບໂຕຂອງ GDP.
- ລາຍຮັບຈາກຄົວເຮືອນ, ວິສາຫະກິດ, ສຳນັກງານອົງການ ຜູ້ທີ່ຜະລິດຂີ້ເຫຍື້ອ 1 Kg x 400 ກີບ.
- ລາຍຮັບຈາກການປັບໄໝຜູ້ທີ່ລະເມີດມາດຕາ 14, 26 ແລະ ມາດຕາ 38 ຂອງດຳລັດ 188/ນຍ, ລົງວັນທີ 3/7/07 ) ຄື:

♦ ຫ້າມຈອດລົດຢູ່ເຂດຕ້ອງຫ້າມ(ມີປ້າຍຫ້າມ), ຜູ້ລະເມີດຈະຖືກປັບໄໝສິບເທົ່າຕົວຂອງມູນຄ່າການ ປັບໄໝຕາມມາດຕາ 14 ຄື :

| | |
|---|---|
| ➢ ລົດຈັກ | 30,000 ກີບ x 10 ເທົ່າ : 300,000 ກີບ/ຄັ້ງ. |
| ➢ ລົດສາມລໍ້ຕິດເຄື່ອງຈັກ | 50,000 ກີບ x 10 ເທົ່າ : 500,000 ກີບ. |
| ➢ ລົດເບົາ, ເກັງ, ກະບະ, ຈິບ ແລະ ລົດຕູ້ | 70,000 ກີບ x 10 ເທົ່າ : 700,000 ກີບ. |
| ➢ ລົດໂດຍສານ 4 ລໍ້ | 100,000 ກີບ x 10 ເທົ່າ : 1,000,000 ກີບ. |
| ➢ ລົດບັນທຸກ 6 ລໍ້ | 150,000 ກີບ x 10 ເທົ່າ : 1,500,000 ກີບ. |
| ➢ ລົດບັນທຸກ 10 ລໍ້ ຂຶ້ນໄປ | 200,000 ກີບ x 10 ເທົ່າ : 2,000,000 ກີບ. |

♦ ຫ້າມຂາຍເຄື່ອງຕາມແຄມທາງ ແລະ ທາງຄົນຍ່າງ, ຜູ້ລະເມີດຈະຖືກປັບໄໝສິບເທົ່າຕົວ ຂອງມູນຄ່າການປັບໄໝຕາມມາດຕາ 26 ຄື :

- ➢ ຜູ້ລະເມີດ 50,000 ກີບ x 10 ເທົ່າ : 500,000 ກີບ/ຄັ້ງ.
- ➢ ເຈົ້າຂອງສຳນັກງານ ຫລື ອາຄານທີ່ຕັ້ງຢູ່ແຄມທາງ ຫາກໄດ້ອານຸຍາດ ໃຫ້ມີການກະທຳດັ່ງກ່າວ ຈະຖືກປັບໄໝ 50,000 ກີບ x 10 ເທົ່າ : 500,000 ກີບ/ຄັ້ງ ເຊັ່ນດຽວກັນ.

♦ ຜູ້ລະເມີດຄວາມສະອາດຂອງຕົວເມືອງ ຈະຖືກປັບໄໝຕາມມາດຕາ 38 ຄື :

- ➢ ຜູ້ໃດຖິ້ມຂີ້ເຫຍື້ອບໍ່ຖືກບ່ອນຕ້ອງຈ່າຍເທົ່າກັບມູນຄ່າ ຂີ້ເຫຍື້ອ 100 ເທື່ອ (400 ກີບ x 1 ກິໂລ x 100 ເທື່ອ).

- ລົດຂົນສົ່ງໂດຍສານທຸກປະເພດ ຫາກໄດ້ຖິ້ມ ຫລືປ່ອຍໃຫ້ຄົນໂດຍສານຂອງຕົນ ສ້າງ ຄວາມເປິເປື້ອນໃສ່ຖະໜົນຫົນທາງ ຈະຖືກປັບໃໝສອງເທົ່າຕົວຂອງມູນຄ່າ 50,000 ກີບ x 2 ເທົ່າ : 100,000 ກີບຕໍ່ຄົນ/ຄັ້ງ.
- ລົດຂົນສົ່ງແຮ່ຊາຍ, ດິນດຳ, ດິນແດງ ສ້າງຄວາມເປິເປື້ອນລົງໃສ່ຖະໜົນ ປັບໃໝ 100,000 ກີບ ຕໍ່ຖັງ/ຄັນ ແລະ ຕ້ອງຈ່າຍຄ່າທຳຄວາມສະອາດ ມູນຄ່າ 500,000 ກີບຕໍ່ໜຶ່ງຖັງລົດນ້ຳ (6 $m^3$).

**(ໝາຍເຫດ :** <u>ອັດຕາການປັບໃໝ ໃໝ່ທີ່ໄດ້ສະເໜີໃນມາດຕາ 14, ມາດຕາ 26 ແລະ ມາດຕາ 38 ຂອງດຳລັດ 188/ນຍ, ລົງວັນທີ 3/7/07 ຂ້າງເທິງນີ້ ແມ່ນຈະໄດ້ນຳສະເໜີລັດຖະບານເພື່ອປັບປຸງ, ເມື່ອລັດຖະບານຕົກລົງແລ້ວ ຈຶ່ງດຳເນີນການໄດ້, ແຕ່ປັດຈຸບັນແມ່ນໃຫ້ປັບໃໝຕາມດຳລັດ 188/ນຍ ໄປກ່ອນ).</u>

- ລາຍຮັບຈາກການເສຍພັນທະລົດຂົນສົ່ງກົນຈັກໜັກ(ລົດຂົນແຮ່,ຊາຍ, ດິນດຳ, ດິນແດງ ແລະ ລົດໄມ້ເບຕົ້ງ). ຄັນລະ 20 000 ກີບ/ເດືອນ.
- ແລະ ລາຍຮັບຈາກອື່ນໆ

+ ຈັດຕັ້ງໜ່ວຍງານກວດກາ ຜັງເມືອງ ແລະ ທາງຫຼວງ ຊຶ່ງປະກອບດ້ວຍບັນດາພະແນກການ ແລະ ຫ້ອງການທີ່ກ່ຽວຂ້ອງເຂົ້າຮ່ວມເປັນຄະນະ (ອພບ, ຍທຂ, ພະແນກການຄ້າ, ຕຳຫລວດຈາລະຈອນ ແລະ ເມືອງ, ເຮັດໜ້າທີ່ໃຫ້ໃບປະເມີນຄວາມສະອາດ 5 ປະເພດ).

+ ໃຫ້ຄະແນນຄວາມສະອາດ ດ້ວຍເຄື່ອງໝາຍ :

1. ສີຂາວ = ດີ;
2. ສີຂຽວ = ພໍໃຊ້;
3. ສີເຫຼືອງ = ຕັກເຕືອນ;
4. ສີແດງ = ປັບໄໝ ;
5. ສີດຳ ໃຫ້ຢຸດຕິກິດຈະການ ;

3.2. **ແຜນວຽກ ແລະ ມາດຕະການເຄຫາສະຖານສະອາດ** ມີດັ່ງນີ້ :

**- ຕົວຊີ້ວັດ ເຄຫາສະຖານສະອາດ:**

+ ຕຶກ, ອາຄານ ເຮືອນ, ກຳແພງ <u>ບໍ່ມີສິ່ງກໍ່ສ້າງຕໍ່ເຕີມ</u>, ປຸກຖືກຕາມລະບຽບຜັງເມືອງທີ່ທາງການເປັນຜູ້ອະນຸມັດ.

+ ມີບ່ອນເກັບມ້ຽນຂີ້ເຫຍື້ອຄົວເຮືອນສະເພາະ

+ ບໍ່ມີຂີ້ຝຸ່ນ, ນ້ຳເສຍ, ນ້ຳເປື້ອນ, ກິ່ນເໝັນຢູ່ພາຍໃນເຄຫາສະຖານຂອງຕົນ.

+ ອາຄານ, ຕຶກ, ເຮືອນຢູ່, ກຳແພງ ຢູ່ໃນສະພາບດີ(ບໍ່ຊຸດໂຊມ),"ທາສີໃໝ່ທຸກເວລາ"

+ ບໍ່ວາງວັດສະດຸກໍ່ສ້າງໃນຂອບເຂດສະຖານທີ່ສາທາລະນະ ແລະ ບໍລິເວນການກໍ່ສ້າງໃໝ່ຕ້ອງມີສິ່ງກັ້ນບັງຄວາມປອດໄພ

- ແຜນວຽກ (Action plans)

+ ປັບປຸງລະບົບສາຍໄຟຟ້າ, ສາຍໂທລະສັບ, ສາຍໂທລະພາບຄືນໃໝ່ ຢູ່ໃນເກນພໍໃຊ້.

+ ເກັບກູ້ ລະບົບສາຍໄຟຟ້າ, ສາຍໂທລະສັບ, ສາຍໂທລະພາບ ທີ່ບໍ່ໄດ້ນຳໃຊ້ ອອກຈາກຕາຄ່າຍ.

+ ທຸກໆເມືອງໃນເຂດເທດສະບານ ສ້າງໃຫ້ມີຕົວແບບເຄຫາສະຖານສະອາດ (1ບ້ານ ແລະ 1 ກິດຈະການເຄຫາສະຖານສະອາດ).

+ ກຳນົດຮູບຊົງດ້ານໜ້າຂອງຕອນດິນ ແລະ ອາຄານທີ່ຈະປຸກສ້າງໃນເສັ້ນທາງໃໝ່ ໃຫ້ມີລັກສະນະຄ້າຍຄືກັນ

+ ໃນເຂດເມືອງໃໝ່ ທີ່ອະນຸຍາດ ຫຼັງວັນທີ 2 ທັນວາ 2015 ໃຫ້ບັນລຸຕົວຊີ້ວັດ ຕົວເມືອງໜ້າຢູ່( 6 ສ) ແລະ ທັນສະໄໝ, ເອົາສາຍໄຟຟ້າ, ໂທລະສັບ ລົງພື້ນດິນ.

+ ຈັດຕັ້ງນຳພາສ້ອມແປງຮົ້ວກຳແພງ, ມ້າງສິ່ງປຸກສ້າງ ທີ່ເກົ່າແກ່ຊຸດໂຊມ.

+ ຈັດຕັ້ງນຳພາບູລະນະ ແລະ ກໍ່ສ້າງພື້ນຖານໂຄງລ່າງ: (ລະບົບລະບາຍນ້ຳ, ທາງຮ່ອມ, ລະບົບໄຟຟ້າ, ລະບົບນ້ຳ ປະປາ) ທີ່ເຊື່ອມຕໍ່ແຕ່ເຮືອນຂອງຕົນຫາຄົວເຮືອນເພື່ອນບ້ານ ແລະ ເສັ້ນທາງ ໃຫ້ໄດ້ມາດຕະຖານ.

+ ຈັດຕັ້ງນຳພາການຮື້ຖອນສິ່ງກໍ່ສ້າງທີ່ຕໍ່ເຕີມທີ່ຜິດກັບແຜນຜັງກຳນົດເປັນຕົ້ນ: ເທີບ, ເງີບ, ຕູບ ແລະ ປ້າຍໂຄສະນາທີ່ບໍ່ສອດຄ່ອງ ກັບລະບຽບຜັງເມືອງ ໃນ 21 ເສັ້ນທາງ ແລະ ທາງຫຼວງແຫ່ງຊາດ

+ ລະດົມທາສີສິ່ງປຸກສ້າງ (ອາຄານ, ຮົ້ວ, ກຳແພງ) ໃນເຂດເທດສະບານທີ່ຕັ້ງລຽບຕາມທາງຫຼວງແຫ່ງຊາດ, 21 ເສັ້ນທາງສາຍຫຼັກ ແລະ ຫ້ອງການຂອງຕົນໃນຂອບເຂດ 4 ຕົວເມືອງໃຫ້ໃໝ່ທຸກເວລາ.

**- ມາດຕະການຮັບປະກັນເຄຫາສະຖານສະອາດ:**

(1). ແຕ່ລະຄົວເຮືອນ, ແຕ່ລະໜ່ວຍ 10 ຫຼັງຄາເຮືອນ ແລະ ບ້ານເປັນເຈົ້າຕົນເອງ, ແກ້ໄຂເອົາເອງ ເປັນສຳຄັນ ໂດຍແມ່ນພະນັກງານສັງກັດລັດ (ຂອງກະຊວງ-ອົງການ, ນະຄອນຫຼວງວຽງຈັນ ແລະ ເມືອງ) ປະຈຳຢູ່ບ້ານ ເປັນຕົວແບບ ແລະ ນາຍບ້ານນຳພາ.

(2). ຖືອົງການຈັດຕັ້ງ ແລະ ປະຊາຊົນທີ່ເປັນເພື່ອນບ້ານເປັນກຳລັງໜູນໃນຊຸມຊົນ(ບ້ານ ຫຼື ທົ່ວໜ່ວຍ10 ຫຼັງຄາເຮືອນ), ເປັນກຳລັງຊຸກດັນແກ້ໄຂຕໍ່ຜູ້ບໍ່ປະຕິບັດ.

(3). ນຳໃຊ້ມາດຕະການດ້ານບໍລິຫານ, ການປັບໃໝ ແລະ ມາດຕະການດ້ານກົດໝາຍເພື່ອແກ້ໄຂ.

(4). ສ້າງຕັ້ງໜ່ວຍງານກວດກາຜັງເມືອງ ນະຄອນຫຼວງວຽງຈັນ(ເອີ້ນວ່າໜ່ວຍກວດກາຜັງເມືອງ ແລະ ເສັ້ນທາງຫຼວງ ອັນດຽວກັນກັບສະອາດ ໂດຍເຮັດໜ້າທີ່ປະເມີນຄວາມສະອາດຂອງເຄຫາສະຖານ 5 ປະເພດ.

(5). ຄົ້ນຄ້ວານຳສະເໜີສ້າງຕັ້ງຕຳຫຼວດເທດສະບານ ເພື່ອກຳກັບປະຕິບັດກົດໝາຍຜັງເມືອງ(ລໍຖ້າກົດໝາຍ).

(6). ຈັດສັນງົບປະມານ ຈາກງົບປະມານຂອງລັດ, ຈາກການປະກອບສ່ວນຂອງສັງຄົມ ແລະ ເຈົ້າຂອງອາຄານສິ່ງປຸກສ້າງໃຫ້ພຽງພໍກັບການເຄື່ອນໄຫວຂອງເຈົ້າໜ້າທີ່.

**3.3. ແຜນວຽກ ແລະ ມາດຕະການຮັບປະກັນພາຫານະສະອາດ** ມີດັ່ງນີ້ :

**- ຕົວຊີ້ວັດ ພາຫະນະສະອາດ:**

+ ພາຫະນະທຸກ(ລົດທຸກປະເພດ) ແລະ ທຸກຄັນທີ່ນຳໃຊ້ໃນຖະໜົນຕ້ອງມີມາດຖານເຕັກນິກຄົບຖ້ວນ, ບໍ່ໃຫ້ມີການດັດແປງເຕັກນິກ.

+ ພາຫະນະທຸກປະເພດທີ່ນຳໃຊ້ໃນຕົວເມືອງບໍ່ສົ່ງຄວັນດຳ ອາຍພິດ ແລະ ສົ່ງສຽງດັງເກີນມາດຖານທີ່ກຳນົດ.

+ ຕີນລົດທຸກປະເພດຕ້ອງລ້າງສະອາດ, ຕີນລົດເປື້ອນບໍ່ອະນຸຍາດໃຫ້ແລ່ນເຂົ້າໃນເຂດເທດສະບານ, ລົດບັນທຸກສິນຄ້າ ແລະ ວັດສະດຸກໍ່ສ້າງຕ່າງໆ ຕ້ອງຫຸ້ມຫໍ່ໃຫ້ດີ, ບໍ່ມີສິ່ງເສດເຫຼືອຕົກໃສ່ຖະໜົນ.

- ແຜນວຽກ (Action plans):

+ ສ້າງຈຸດລ້າງຕີນລົດ ກ່ອນຈະເຂົ້າສູ່ຕົວເມືອງ 05 ຈຸດ ຄື: ເມືອງ ຫາດຊາຍຟອງ 2 ແຫ່ງ: ເຂດບ້ານບໍ່ໂອ ແລະ ເຂດບ້ານ ສາລາຄຳ; ເມືອງສີໂຄດ 2 ແຫ່ງ: ເຂດບ້ານໂນນຂີ້ເຫລັກ ແລະ ເຂດສາມແຍກໜອງບຶກ, ເມືອງໄຊເສດຖາ ເຂດບ້ານນາຄວາຍ, ລວມທັງ ຈຸດເຂົ້າ - ອອກ ສະຖານທີ່ກິດຈະການໂຄງການກໍ່ສ້າງຕ່າງໆ, ເມືອງໄຊທານີ 2 ແຫ່ງ: ເຂດຫຼັກ 18 ແລະ ດົງໝາກຄາຍ.

+ ກາບັນຈຸຂອງລົດບັນທຸກສິນຄ້າ ແລະ ວັດສະດຸກໍ່ສ້າງ, ລົດໂດຍສານ ທີ່ຈະເຂົ້າມາໃນຂອບເຂດ ເທດສະບານໃຫ້ຢູ່ໃນເກນອະນຸມັດ.

+ ລົດໂດຍສານທຸກປະເພດຕ້ອງມີກະຕ່າ ຫລື ຖົງໃສ່ຂີ້ເຫຍື້ອ.

+ ສົ່ງເສີມການສ້າງຕັ້ງສູນກວດກາເຕັກນິກສະເລ່ຍ ເມືອງລະແຫ່ງ.

+ ຄົ້ນຄວ້າແຜນນຳໃຊ້ນ້ຳມັນຊີວະພາບ (Biodisell) ໃຫ້ກວ້າງຂວາງ, ນຳໃຊ້ລົດທີ່ແລ່ນດ້ວຍໄຟຟ້າ ແລະ ແອັດຊັງ ເພື່ອລົດຜ່ອນມົນລະພິດ.

+ ສ້າງຕັ້ງໜ່ວຍງານກວດກາ ພາຫະນະທຸກປະເພດ, ໜ່ວຍງານດຽວກັນກັບຂ້າງເທິງ ເພື່ອໃຫ້ປະເມີນຄະແນນພາຫະນະສະອາດ.

+ ກວດກາກິດຈະການ ອູ່ສ້ອມແປງລົດ, ການບໍລິການລ້າງອັດສີດລົດ ບໍ່ໃຫ້ລ້າງຂີ້ດິນ, ຂີ້ຕົມ ແລະ ສິ່ງເສດເຫລືອ ລົງສູ່ຮ່ອງ ລະບາຍນ້ຳໂດຍກົງ.

- **ມາດຕະການຮັບປະກັນພາຫະນະສະອາດ:**

1) ສຶກສາອົບຮົມຜູ້ຂັບຂີ່ ທີ່ລະເມີດລະບຽບການຂົນສົ່ງ ແລະ ສ້າງຄວາມເປື້ອນເປິະໃສ່ເສັ້ນທາງ.

2) ຫ້າມບໍ່ໃຫ້ພາຫະນະຂົນສົ່ງ ລົດບັນທຸກໜັກ (ລົດ10 ລໍ້, ລົດພວງ) ແລ່ນຜ່ານເສັ້ນທາງທີ່ຫ້າມແລ່ນ ທີ່ໄດ້ກຳນົດໄວ້ແລ້ວ.

3) ດຳເນີນການປັບໃໝຕໍ່ຜູ້ລະເມີດ ລະບຽບກົດໝາຍການຈໍລະຈອນທາງບົກການຂົນສົ່ງທາງບົກ ( ໃນດຳລັດ 188/ນຍ ລົງວັນທີ 3/7/07, ມາດຕາ 27, 28 ແລະ ມາດຕາ 33 )

4) ຄົ້ນຄວ້າສ້າງໃຫ້ມີລະບຽບການຄຸ້ມຄອງ ກິດຈະການອູ່ສ້ອມແປງລົດ, ການບໍລິການລ້າງອັດສີດ ແລະ ບ່ອນລ້າງຕີນລົດ ທີ່ຈະເຂົ້າສູ່ຕົວເມືອງ.

5) ສົ່ງເສີມໃຫ້ເອກະຊົນຜູ້ທີ່ມີເງື່ອນໄຂລົງທຶນກໍ່ສ້າງບ່ອນລ້າງຕີນລົດຕາມຈຸດເຂົ້າຕົວເມືອງທີ່ຍັງເປັນທາງດິນແດງ ແຕ່ລະເສັ້ນທາງເຂົ້າຫາຕົວເມືອງ.

6) ຫລຸດຜ່ອນການນຳເຂົ້າພາຫະນະມືສອງທຸກປະເພດ ແລະ ລົດເກົ່າທີ່ຂາດມາດຖານເຕັກນິກ.

3.4. **ແຜນວຽກ ແລະ ມາດຕະການຮັບປະກັນສາທາລະນູປະໂພກສະອາດ** ມີດັ່ງນີ້ :

- **ຕົວຊີ້ວັດສາທາລະນູປະໂພກສະອາດ:**

+ ສວນສາທາລະນະທຸກແຫ່ງຮັກສາຄືບຕາມກຳນົດໝາຍ ແລະ ງາມທຸກເວລາ.

+ ສະຖານີຈອດລົດ, ທ່າເຮືອ, ສະໜາມບິນ ທຸກໆແຫ່ງບໍ່ເປິເປື້ອນ, ເປັນລະບຽບຮຽບຮ້ອຍ.

+ ຕະຫລາດ, ສູນການຄ້າ, ຮ້ານສັບພະສິນຄ້າ, ຮ້ານອາຫານໃນຕົວເມືອງ ບໍ່ສົ່ງຜົນກະທົບທາງລົບຕໍ່ສິ່ງແວດລ້ອມ (ບໍ່ມີຂີ້ເຫຍື້ອຊະຊາຍ, ບໍ່ປ່ອຍນ້ຳເປື້ອນລົງສູ່ຮ່ອງສາທາລະນະໂດຍກົງ, ບໍ່ສົ່ງກິ່ນເໝັນ ແລະ ມີບ່ອນຈອດລົດທີ່ພຽງພໍ).

+ ໂຮງຮຽນ, ໂຮງໝໍ, ສະໂມສອນອະເນກປະສົງ, ໂຮງລະຄອນ, ຫໍວັດທະນະທຳ, ຫໍສະໝຸດ, ສະໜາມກິລາ.... ມີສະພາບແວດລ້ອມດີ (ບໍ່ມີຂີ້ເຫຍື້ອ, ບໍ່ມີຂີ້ຝຸ່ນ, ບໍ່ມີນ້ຳເປື້ອນ ແລະ ບໍ່ສົ່ງກິ່ນເໝັນ).

- ແຜນວຽກ (Action plans)

+ ບົວລະບັດຮັກສາ ແລະ ປັບປຸງ ສວນສາທາລະນະໃນຕົວເມືອງທີ່ມີແລ້ວ ໃຫ້ຄົງຢູ່ ແລະ ສາມາດບໍລິການຮັບໃຊ້ດີ.

+ ຈັດສັນ ແລະ ປັບປຸງການບໍລິການບ່ອນຈອດລົດສາທາລະນະ ( Parking ) ທີ່ມີແລ້ວ ໃຫ້ເປັນລະບົບລະບຽບ.

+ ກໍ່ສ້າງບ່ອນຈອດລົດໃຫຍ່ ຂະໜາດຕ່າງໆ ໃນທຸກໆເມືອງ, ເທດສະບານຂອງເມືອງໜຶ່ງ ບໍ່ໜ້ອຍ 5 ແຫ່ງ, ເຂດຊຸມຊົນ

ໜາແໜ້ນໃຫ້ພຽງພໍ.

+ ຟື້ນຟູປົວແປງ ໂຮງຮຽນ, ໂຮງໝໍ, ສະໂມສອນຕາມແຄມທາງຫຼວງແຫ່ງຊາດ ແລະ ທາງຫຼວງຂອງນະຄອນຫລວງວຽງຈັນ ໃຫ້ໄດ້ມາດຕະຖານໃໝ່ທຸກເວລາ.

+ ກໍ່ສ້າງ ແລະ ປັບປຸງສະຖານນີລົດເມ, ລົດໂດຍສານພາຍໃນ ແລະ ຕ່າງປະເທດ ສາຍເໜືອ ແລະ ສາຍໃຕ້ ໃຫ້ເຂົ້າສູ່ມາດຕະຖານ.

+ ປັບປຸງ, ປະຕິສັງຄອນຫໍພິພິດຕະພັນ ແລະ ປູສະນິຍະສະຖານ ຈຳນວນໜຶ່ງຄືນໃໝ່.

+ ປູກຈິດສຳນຶກໃຫ້ນັກຮຽນ, ໃຫ້ມີສ່ວນຮ່ວມໃນການຮັກສາຄວາມສະອາດ.

+ ປັບປຸງຍົກລະດັບຕະຫລາດໃນຕົວເມືອງໃຫ້ເປັນສູນການຄ້າ, ສືບຕໍ່ຍົກຍ້າຍ ແລະ ຈັດສັນຕະຫລາດທີ່ມີຄວາມສັບສົນແອອັດ ອອກໄປສູ່ຊານເມືອງ: ຕະຫລາດຂົວດິນ (ໜອງຈັນ), ຕະຫຼາດຂົວທາດຫຼວງ, ຕະຫຼາດສວນມອນ, ທົ່ງຂັນຄຳ, ສີໄຄ ແລະ ອື່ນໆ...ໄປສ້າງຢູ່ຈຸດໃໝ່ທີ່ເໝາະສົມ.

+ ສ້າງ ແລະ ປັບປຸງສວນສາທາລະນະ, ສະຖານທີລົດໂດຍສານ, ຕະຫຼາດ, ຂຸມຂີ້ເຫຍື້ອໃນເທດສະບານຂອງທຸກໆເມືອງ.

- ມາດຕະການຮັບປະກັນ<u>ສາທາລະນຸປະໂຫຍດສະອາດ</u>.

1) ຈັດຕັ້ງ ແລະ ບັນຈຸແຮງງານຄົນເຂົ້າໃນການບົວລະບັດຮັກສາສວນສາທາລະນະ ເປັນປະຈຳ.

2) ກວດກາ ແລະ ໃຫ້ຄະແນນຕໍ່ກິດຈະການສາທາລະນຸປະໂຫຍດ ເປັນຕົ້ນສະຖານນີລົດໂດຍສານ ແລະ ສະຖານີຈອດລົດ (Parking) ທີ່ມີແລ້ວແຕ່ລະເດືອນ.

3) ສ້າງ ແລະ ປະກາດໃຊ້ລະບຽບການຄຸ້ມຄອງ ແລະ ບໍລິການສວນສາທາລະນະ.

4) ສົ່ງເສີມເອກະຊົນລົງທຶນ, ສ້າງບ່ອນຈອດລົດ (Parking)

5) ລະດົມທຶນຈາກສັງຄົມ ເພື່ອມາຊ່ວຍສະໜັບສະໜູນ ປັບປຸງ ປະຕິສັງຂອນ ສາທາລະນຸປະໂຫຍດຂອງຕົວເມືອງ ແລະ ຈັດຕັ້ງລະດົມຊຸມຊົນມີສ່ວນຮ່ວມໃນການຄຸ້ມຄອງ, ຮັກສາ ແລະ ພັດທະນາກິດຈະການສາທາລະນຸປະໂຫຍດໃນເຂດໃຫ້ຄຽງກັບຕົນຢູ່.

6) ປະຕິບັດມາດຕະການໃຫ້ຄະແນນ, ກ່າວເຕືອນ, ປັບໃໝ ແລະ ລົງວິໄນຕໍ່ຜູ້ລະເມີດລະບຽບການຄຸ້ມຄອງສວນສາທາລະນະ ແລະ ບ່ອນຈອດລົດໃນຕົວເມືອງ.

3.5. **ແຜນວຽກ ແລະ ມາດຕະການຮັບປະກັນໂຮງຈັກ-ໂຮງງານ ສະອາດ** ມີດັ່ງນີ້ :

**- ຕົວຊີ້ວັດໂຮງຈັກ-ໂຮງງານ ສະອາດ:**

+ ໂຮງງານ, ໂຮງຈັກ, ໂຮ່ງຊ່າງບໍ່ສົ່ງມົນລະພິດ, ບໍ່ມີສານເຄມີຕົກຄ້າງ.

+ ບໍ່ສົ່ງຄວັນ ແລະ ບໍ່ມີກິ່ນເໝັນ

+ ບໍ່ມີສຽງດັງເກີນກຳນົດ ສົ່ງອອກນອກເຂດຂອງຕົນ.

+ ມີລະບົບບຳບັດນ້ຳເສຍ, ນ້ຳເປື້ອນ ກ່ອນປ່ອຍລົງສູ່ຮ່ອງນ້ຳທຳມະຊາດ.

+ ເສັ້ນທາງເຂົ້າ-ອອກ ໂຮງງານ, ໂຮງຈັກ ມີຄວາມສະອາດ.

- ແຜນວຽກ (Action plans)

+ ຈັດສັນຄືນໃໝ່ ແລະ ຍົກຍ້າຍບັນດາອູ່ສ້ອມແປງ, ຮ້ານພົ່ນສີ, ຮ້ານຂາຍເຄື່ອງວັດສະດຸກໍ່ສ້າງ, ໂຮງງານປະສົມເບຕົງ ແລະ ອື່ນໆ... ທີ່ມີຜົນກະທົບຕໍ່ສິ່ງແວດລ້ອມອອກຫ່າງຈາກຊຸມຊົນ.

+ ຈັດສັນຄືນໃໝ່ ແລະ ຫັນເຂົ້າສູ່ແຜນຜັງການຈັດສັນເຂດປະກອບການໃນຕົວເມືອງຕາມຍຸດທະສາດ, ເຊິ່ງກຳນົດອອກໃນມະຕິ VI : ເຂດໂຮງງານອຸດສາຫະກຳໜັກ, ອຸດສາຫະກຳເບົາ, ເຂດບໍລິການ...

+ ເກັບກຳຂໍ້ມູນ ແລະ ກວດກາອູ່ສ້ອມແປງລົດ, ຮ້ານພົ່ນສີລົດ, ຮ້ານຂາຍເຄື່ອງວັດສະດຸກໍ່ສ້າງ, ຮ້ານຊື້ຂາຍເຫລັກເສດ ແລະ ໂຮງງານປະສົມເບຕົງ ໃນເທດສະບານຕົວເມືອງໄປສູ່ຕະຫຼາດອຸປະກອນກໍ່ສ້າງ (450ປີ) ແລະ ເຂດອື່ນໆ.

+ ປັບປຸງ ແລະ ຊຸກຍູ້ການເຄື່ອນໄຫວຂອງອົງການມາດຖານນະຄອນຫລວງວຽງຈັນ (ພະແນກວິທະຍາສາດ ແລະ ເຕັກໂນໂລຊີ) ໃຫ້ເປັນເຄື່ອງມືກວດກາຄຸ້ມຄອງໃຫ້ເປັນປະຈຳ.

**- ມາດຕະການຮັບປະກັນໂຮງຈັກ, ໂຮງງານ ສະອາດ:**

1) ສຶກສາອົບຮົມ, ກ່າວເຕືອນຕໍ່ຜູ້ເປັນເຈົ້າຂອງກິດຈະການທີ່ສົ່ງຜົນກະທົບ ຕໍ່ສິ່ງແວດລ້ອມຕົວເມືອງ.
2) ສົ່ງເສີມພາກເອກະຊົນ, ປະຊາຊົນ ແລະ ໃຊ້ກຳລັງແຮງປະຊາຊົນ, ສື່ມວນຊົນຢູ່ພາຍໃນພື້ນທີ່ເພື່ອກວດກາແກ້ໄຂ.
3) ໃຊ້ມາດຕະການດ້ານບໍລິຫານ, ປັບໃໝ ແລະ ກົດໝາຍຕໍ່ຜູ້ລະເມີດ.
4) ໜ່ວຍງານຂອງລັດຕ້ອງເຄື່ອນໄຫວກວດກາຕໍ່ທຸກກິດຈະການທີ່ມີທາງສຽງວິພາກວິຈານຕໍ່ຜົນກະທົບຕໍ່ສິ່ງແວດລ້ອມ.

3.6. **ແຜນວຽກ ແລະ ມາດຕະການຮັບປະກັນການບໍລິໂພກສະອາດ** ມີດັ່ງນີ້ :

**- ຕົວຊີ້ວັດການບໍລິໂພກສະອາດ.**

+ ພົນລະເມືອງກິນອາຫານຖືກຫລັກສຸຂະອານາໄມ (ກິນອາຫານທີ່ສຸກ, ພືດຜັກສົດ, ໝາກໄມ້ສົດ, ຊີ້ນ ແລະ ປາທີ່ບໍ່ມີເຊື້ອພະຍາດ ແລະ ສານພິດຕົກຄ້າງ).

+ ຜູ້ປູກຝັງນຳໃຊ້ຝຸ່ນຊີວະພາບ ແລະ ຝຸ່ນເຄມີເຂົ້າໃນການປູກພືດຜັກ ແລະ ຕົ້ນໄມ້ໃຫ້ໝາກ ຖືກຫຼັກອານາໄມຂອງສາກົນ.

+ ຜູ້ປຸງແຕ່ງ ແລະ ຮ້ານອາຫານໃນເທດສະບານຕ້ອງເອົາຊີ້ນຈາກໂຮງງານຂ້າສັດທີ່ມີມາດຖານ (ໂຮງງານຂ້າສັດທັນສະໄໝດອນດູ່, ໂຮງງານຂ້າສັດທັນສະໄໝ XP ຟາມລ້ຽງງົວຫລັກ 24 ແລະ ໂຮງງານຂ້າສັດຈະເລີນການກະເສດ...)

+ ບ່ອນຈຳໜ່າຍຜົນຜະລິດກະສິກຳ, ສະບຽງອາຫານ ຕ້ອງເປັນສະຖານທີ່ທີ່ມີຄວາມສະອາດ ປາສະຈາກສິ່ງເສດເຫລືອທາງດ້ານສິ່ງແວດລ້ອມ.

- ແຜນວຽກ (Action plans)

+ ແຜນວຽກສົ່ງເສີມປູກພືດຜັກ, ໝາກໄມ້ແບບທຳມະຊາດ, ປອດສານເຄມີ ແລະ ພືດຜັກສະອາດ (ຕາມມາດຖານສາກົນ).

+ ສ້າງປຶ້ມຄູ່ມືແນະນຳການການປຸງແຕ່ງອາຫານຂອງຄົວເຮືອນ, ຮ້ານອາຫານ ແລະ ໂຮງແຮມ.

+ ແຜນວຽກສົ່ງເສີມການບໍລິໂພກອາຫານ ເພື່ອສຸຂະພາບ ແລະ ຄວາມຈະເລີນພັນ (ຕາມຕົວຊີ້ວັດຂອງສາກົນ)

+ ກວດກາຄຸ້ມຄອງການນຳໃຊ້, ການຜະລິດຢາ ຢູ່ພາຍໃນ ແລະ ນຳເຂົ້າຈາກຕ່າງປະເທດ.

+ ຍົກລະດັບໂຮງງານຂ້າສັດ 3 ແຫ່ງ (ໂຮງງານຂ້າສັດທັນສະໄໝດອນດູ່, ໂຮງງານຂ້າສັດທັນສະໄໝ XP ຟາມລ້ຽງງົວຫລັກ 24 ແລະ ໂຮງງານຂ້າສັດ ຈະເລີນການກະເສດ) ໃຫ້ກາຍເປັນແຫຼ່ງສະໜອງຊີ້ນສັດສະອາດ

+ ສົ່ງເສີມສື່ມວນຊົນ ແນະນຳ ແລະ ຕຳນິວິຈານ ຕໍ່ສະພາບການບໍລິໂພກ.

+ ສ້າງ ແລະ ປັບປຸງຕະຫຼາດກະສິກຳ, ຕະຫລາດຂາຍສົ່ງ-ຂາຍຍ່ອຍ ຕາມແຕ່ລະເມືອງ.

+ ສົ່ງເສີມໂຄງການຜະລິດກະສິກຳ, ສະບຽງອາຫານສະອາດໃຫ້ເປັນສິນຄ້າທີ່ມີມາດຖານຂອງແຕ່ລະເມືອງ

+ ສົ່ງເສີມການປຸງແຕ່ງ, ການຫຸ້ມຫໍ່, ຂະຫຍາຍການຈຳໜ່າຍສິນຄ້າກະສິກຳ: ຊີ້ນ, ປາ ຕາມສູນການຄ້າໃຫຍ່ໃນເທດສະບານຕົວເມືອງ.

+ ສ້າງປຶ້ມຄູ່ມືການບໍລິໂພກສະອາດຂອງພາຍໃນ ແລະ ຕ່າງປະເທດ.

+ ສ້າງນິຕິກຳ ແລະ ເຄື່ອງມືໃນການກວດກາຜົນຜະລິດກະສິກຳປອດສານເຄມີ.

**- ມາດຕະການຮັບປະກັນການບໍລິໂພກສະອາດ:**

1) ຜູ້ຜະລິດ ແລະ ປຸງແຕ່ງສະບຽງອາຫານຕ້ອງສະເໜີໂຄງປະກອບຂອງແຫຼ່ງວັດຖຸດິບທັງໝົດ,ຖ້າບໍ່ສະເໜີຖືເປັນຄວາມຜິດ.

2) ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບການ, ຜູ້ຜະລິດສະບຽງອາຫານຈາກ ໂຮງງານຂ້າສັດ, ຕະຫລາດ ຈຳໜ່າຍສິນຄ້າ ຕ້ອງເປັນເຈົ້າການຮັບຜິດຊອບຄວບຄຸມ, ກວດກາຄຸນນະພາບ ແລະ ມາດຖານ.

3) ດຳເນີນການກວດກາໃຫ້ຄະແນນຄຸນນະພາບອາຫານ ແລະ ຢາສະອາດ ເປັນປະຈຳອາທິດ ແລະ ລາຍງານສັງຄົມ.

4) ກ່າວເຕືອນ, ປັບໃໝ ແລະ ລົງວິໃນຕໍ່ຜູ້ລະເມີດ, ຍ້ອງຍໍສັນລະເສີນຜູ້ປະຕິບັດດີ ແລະ ຜູ້ໃຫ້ເບາະແສການລະເມີດ.

3.7. **ແຜນວຽກຮັບປະກັນນ້ຳສະອາດ** ມີດັ່ງນີ້ :

**- ຕົວຊີ້ວັດນ້ຳສະອາດ**

**+ ບໍ່ມີນ້ຳຖ້ວມຂັງຕາມຕົວເມືອງ ແລະ ເສັ້ນທາງ**

+ ຮ່ອງລະບາຍນ້ຳ, ໜອງນ້ຳທຸກໜອງບໍ່ມີກິນເໜັນບໍ່ເປັນບ່ອນເພາະເຊື້ອພະຍາດ ແລະ ສັດນ້ຳສາມາດຢູ່ໄດ້.

+ ສາຍນ້ຳ, ແມ່ນ້ຳ ແລະ ແຄມນ້ຳງື່ມ, ນ້ຳຂອງ, ຫວ້ຍຮ່ອງບໍ່ມີຂີ້ເຫຍື້ອ ແລະ ສາມາດ ຊົມໃຊ້ໄດ້.

+ ບໍ່ມີເຄມີເຈືອປົນໃນສາຍນ້ຳ.

+ ນ້ຳດື່ມທຸກປະເພດທີ່ຈຳໜ່າຍຕ້ອງຮັບປະກັນຄຸນນະພາບ ແລະ ບັນລຸມາດຕະຖານ, ຕ້ອງຜ່ານຂະບວນການຕົ້ມ, ກັ່ນຕອງ ແລະ ຂ້າເຊື້ອຢ່າງຖືກຕ້ອງຕາມຫລັກອະນາໄມ.

**- ແຜນວຽກ (Action plans)**

+ ອານາໄມ ຮ່ອງລະບາຍນ້ຳໃນເທດສະບານ ແລະ ຊານເມືອງ.

+ ກວດກາໂຮງຜະລິດນ້ຳດື່ມເປັນປະຈຳໃຫ້ບັນລຸມາດຖານຂອງກະຊວງໂຍທາທິການ ແລະ ຂົນສົ່ງ.

+ ສ້າງອ່າງບຳບັດນ້ຳເປື້ອນກ່ອນໄຫຼລົງສູ່ຄອງ, ບຶງ-ນ້ຳຂອງ, ນ້ຳງື່ມ ແລະ ທຸກໆຄອງໃຫຍ່.

+ ສ້າງອ່າງປ່ອຍອາຈົມເມືອງໜຶ່ງ ໜຶ່ງແຫ່ງ.

+ ສ້າງໃຫ້ມີໂຮງງານບຳບັດນ້ຳເປື້ອນໃນຕົວເມືອງ ເພື່ອຫຼຸດຜ່ອນຜົນກະທົບດ້ານສິ່ງແວດລ້ອມ

+ ກວດກາການນຳໃຊ້ຮ່ອງລະບາຍນ້ຳໃນຕົວເມືອງ ແລະ ຊານເມືອງ.

+ ກວດກາ ແລະ ຄຸ້ມຄອງ ນ້ຳງື່ມ ນ້ຳຂອງ ເຮັດໃຫ້ນ້ຳບໍ່ມີມົນລະພິດ, ອາບ ແລະ ຊົມໃຊ້ໄດ້

+ ສ້າງໃຫ້ມີນິຕິກຳໃນການຄຸ້ມຄອງ ແລະ ມາດຕະການຕໍ່ຜູ້ລະເມີດຕໍ່ລະບຽບການຄຸ້ມຄອງຮ່ອງລະບາຍນ້ຳໃນຕົວເມືອງ.

+ ສ້າງແຜນຜັງແມ່ບົດລະບົບລະບາຍນ້ຳຕົວເມືອງ.

+ ຄົ້ນຄວ້າແຫລ່ງທຶນການກູ້ຢືມ ຫລື ຊ່ວຍເຫລືອລ້າ ແລະ ຊອກຫານັກລົງທຶນພາຍໃນ ແລະ ຕ່າງປະເທດ ຜູ້ທີ່ມີເງື່ອນໄຂມາລົງທຶນກໍ່ສ້າງຮ່ອງລະບາຍນ້ຳທີ່ເປັນຮ່ອງດິນທຳມະຊາດໃຫ້ໄດ້ມາດຕະຖານ.

- ມາດຕະການຮັບປະກັນນ້ຳສະອາດ

1) ຈັດຕັ້ງໜ່ວຍງານລອງຮ່ອງລະບາຍນ້ຳສາຍແມ່, ຮ່ອງແຄມທາງທີ່ກໍ່ສ້າງໄດ້ມາດຕະຖານ, ຢ່າງໜ້ອຍ ປີລະຄັ້ງ ແລະ ຮ່ອງທຳມະຊາດ ກ່ອນລະດູຝົນ.

2) ລະດົມທຶນເຂົ້າໃນການລ່ວງຮ່ອງລະບາຍນ້ຳ 12 ຕື້ກີບ ຕໍ່ປີ

3) ປັບປຸງ ແລະ ກໍ່ສ້າງໂຮງງານບຳບັດນ້ຳເປື້ອນທີ່ອອກຈາກຄົວເຮືອນ, ໂຮງແຮມ, ຮ້ານອາຫານ ແລະ ໂຮງຈັກໂຮງງານ.

4) ກວດກາໃຫ້ຄະແນນນ້ຳສະອາດ ແລະ ປັບໃໝຜູ້ລະເມີດແຜນຜັງລະບາຍນ້ຳ, ຖິ້ມຂີ້ເຫຍື້ອຊະຊາຍ.

5) ສັງຄົມຕ້ອງມີສ່ວນຮ່ວມໃນການປະກອບທຶນ, ແຮງງານເຂົ້າຊ່ວຍໃນການ ອານາໄມ, ຈົກລອງຮ່ອງ ລະບາຍນ້ຳ ແລະ ຕຳນິຕິຕຽນຜູ້ລະເມີດ.

## 3.8. ແຜນວຽກ ແລະ ມາດຕະການຮັບປະກັນທ້ອງຟ້າສົດໃສ ມີດັ່ງນີ້ :

- **ຕົວຊີ້ວັດທ້ອງຟ້າສົດໃສ**

+ ທ້ອງຟ້າຂອງນະຄອນຫລວງສົດໃສ, ບໍ່ມີຄວັນພິດ ແລະ ຄວັນການຈູດເຜົາປົກຄຸມທ້ອງຟ້າວຽງຈັນ

+ ບໍ່ມີສານພິດ, ຄວັນລະເຫີຍປົນເປື້ອນໃນອາກາດ.

+ ອຸນນະພູມຄວາມຮ້ອນຢູ່ໃນເກນປົກກະຕິ.

- **ແຜນວຽກ (Action plans)**

+ ກວດກາກິດຈະການ ແລະ ຄຸ້ມຄອງການຈູດຂີ້ເຫຍື້ອໃນເທດສະບານຕົວເມືອງໂດຍແນະນຳ ຄອບຄົວ, ສຳນັກງານອົງການ ທົ່ວໜ່ວຍທຸລະກິດ ບໍ່ໃຫ້ຈູດຂີ້ເຫຍື້ອ ດ້ວຍຕົນເອງ

+ ເຝົ້າລະວັງ ແລະ ຄວບຄຸມ ການຈູດປ່າ, ຈູດໄຮ່, ຈູດທົ່ງນາ, ໃຫ້ຫລຸດລົງໃນແຕ່ລະປີ ແລະ ຢຸດຕິຢ່າງສິ້ນເຊີງໃນປີ 2020.

+ ປັບປຸງ ແລະ ຂະຫຍາຍເຂດຂຽວ, ສວນສາທາລະນະ, ປູກຕົ້ນໄມ້ໃຫ້ຮົ່ມ ແລະ ຕົ້ນໄມ້ປະດັບໃນຕົວເມືອງ ແລະ ເຂດຂະຫຍາຍຕົວເມືອງໃໝ່ ເພື່ອຫລຸດຜ່ອນສະພາບໂລກຮ້ອນ.

+ ສ້າງໃຫ້ມີແສງສະຫວ່າງຕາມເສັ້ນທາງໃນເທດສະບານ ແລະ ທາງຫຼວງແຫ່ງຊາດ.

+ ປູກຕົ້ນໄມ້ເຮືອນຢູ່ ແລະ ເສັ້ນທາງ 2 ຕົ້ນ/ຄົນ/ປີ, ຮັກສາບຶງ, ໜອງໃຫຍ່ 10 ເຮັກຕາ ຂຶ້ນໄປ ເພື່ອເປັນອ່າງ ໂຕ່ງນ້ຳໃຫຍ່, ໃຫ້ຄວາມຊຸ່ມຊື່ນ.

+ ລະດົມປະຊາຊົນເຂົ້າຮ່ວມໃນການເຮັດສັນຍາເກັບມັງນຂີ້ເຫຍື້ອ

+ ສ້າງນິຕິກຳຄຸ້ມຄອງຂີ້ເຫຍື້ອຄົວເຮືອນ ແລະ ສຳນັກງານອົງການ.

+ ປູກຈິດສຳນຶກ ການຄຸ້ມຄອງມົນລະພິດທາງອາກາດ.

+ ສົ່ງເສີມໃຫ້ນັກລົງທຶນພາຍໃນ ແລະ ຕ່າງປະເທດຜູ້ທີ່ມີເງື່ອນໄຂປູກໄມ້ໃຫ້ເປັນປ່າ.

+ ສົ່ງເສີມໃຫ້ສັງຄົມມີສ່ວນຮ່ວມໃນການປັບປຸງບູລະນະ ແລະ ຂະຫຍາຍເຂດຂຽວ, ສວນສາທາລະນະ, ປູກຕົ້ນໄມ້ໃຫ້ຮົ່ມ.

**- ມາດຕະການຈັດຕັ້ງປະຕິບັດຮັບປະກັນທ້ອງຟ້າສົດໃສ:**

+ ທຸກຄອບຄົວ, ຫົວໜ່ວຍທຸລະກິດ, ສຳນັກງານອົງການເຂົ້າຮ່ວມເຮັດສັນຍາເກັບມ້ຽນຂີ້ເຫຍື້ອ.

+ ທຸກຄອບຄົວ, ຫົວໜ່ວຍທຸລະກິດ, ສຳນັກງານອົງການຕ້ອງມີສ່ວນຮ່ວມໃນການຕິດຕັ້ງໄຟແສງສະຫວ່າງໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

+ ຕິດຕາມກວດກາຊຸກຍູ້ໃຫ້ປະຊາຊົນຍຸດຕິການຖາງປ່າເຮັດໄຮ່, ເຮັດສວນ , ຈູດເຜົາຂີ້ເຫຍື້ອ, ຫຼຸດຜ່ອນການດັ່ງຝືນ.

+ ປັບໃໝ, ລົງໂທດ ຕໍ່ຜູ້ທີ່ຈູດຂີ້ເຫຍື້ອຊະຊາຍ, ຈູດປ່າ, ຈູດໄຮ່ ແລະ ຈູດທົ່ງນາ.

+ ປູກຈິດສຳນຶກໃຫ້ນັກຮຽນໃນການຄຸ້ມຄອງມົນລະພິດ ແລະ ການປ່ຽນແປງທາງດິນຟ້າອາກາດ

ມາດຕາ 4: **ວິທີການ ແລະ ກົນໄກການຈັດຕັ້ງປະຕິບັດ:**

4.1. **ກົນໄກ** :

- ໄລຍະສະເພາະໜ້າ ມອບໃຫ້ຄະນະອານຸກຳມະການສະເຫລີມສະຫລອງສອງວັນປະຫວັດສາດ ແລະ ອົງການປົກຄອງນະຄອນຫລວງວຽງຈັນ ເປັນກົນໄກຈັດຕັ້ງປະຕິບັດບັນຊາໂຄງການວຽງຈັນສະອາດ ໂດຍແມ່ນປະທານ ອພບ ເປັນຜູ້ບັນຊາໂດຍກົງ ຊຶ່ງມີພະແນກກ່ຽວຂ້ອງເຂົ້າຮ່ວມຄື: ພະແນກ ຍທຂ, ອພບ, ປກສ, ພະແນກສາທາລະນະສຸກ,ພະແນກອຸດສະຫະກຳການຄ້າ, ພະແນກພະລັງງານ ແລະ ບໍ່ແຮ່, ພະແນກໄປສະນີໂທລະຄົມ ມະນາຄົມ,ພະແນກວິທະສາດເຕັກໂນໂລຊີ ແລະ ພະແນກ ກະສິກຳ.

- ໃນໄລຍະຍາວ ມອບໃຫ້ອົງການປົກຄອງນະຄອນຫລວງວຽງຈັນ ເປັນການຈັດຕັ້ງບັນຊາ ໂດຍມີເມືອງ, ບໍລິສັດພາຍໃຕ້ການຄຸ້ມຄອງກວດກາຂອງ ອພບ.

4.2. **ວິທີການ :**

- ໃຫ້ເຜີຍແຜ່ນະຕິຕົກລົງຂອງອົງການປົກຄອງສະບັບນີ້ ໃຫ້ທົ່ວເຖິງ ໃຫ້ກາຍເປັນສະຕິຄວາມຮັບຜິດຊອບ ຂອງພົນລະເມືອງພາຍໃນ ແລະ ຊາວຕ່າງປະເທດໃນນະຄອນຫລວງວຽງຈັນ.

- ພິມປື້ມຄູ່ມືເພື່ອໂຄສະນາເຜີຍແຜ່ ຕາມສຳນັກງານອົງການ, ເມືອງ ແລະ ລົງເຖິງຮາກຖານບ້ານຈົນຮອດ ແຕ່ລະຄົວເຮືອນ (ທຸກຄອບຄົວຕ້ອງມີປຶ້ມນີ້ ແລະ ຊື້ປຶ້ມນີ້ ດ້ວຍຕົນເອງ 10.000 ກີບ/ຫົວ)

- ກວດກາໃຫ້ຄະແນນວຽກໂຄງການນະຄອນຫລວງວຽງຈັນສະອາດ ໂດຍແມ່ນ ອພບ ແລະ ພະແນກສາທາລະນະສຸກເປັນເຈົ້າການ ເປັນຜູ້ໃຫ້ຄະແນນບ້ານ, ເມືອງ ແລະ ສຳນັກງານອົງການ.

- ທຸກໆ 06 ເດືອນ ໃຫ້ມີການສະຫລູບປະເມີນຜົນຕີລາຄາ ການຈັດຕັ້ງປະຕິບັດ ແລ້ວລາຍງານ ຂັ້ນເທິງຮັບຊາບ.

**ທ/ນ ອົງການປົກຄອງນະຄອນຫລວງວຽງຈັນ**

**ເຈົ້າຄອງນະຄອນຫຼວງວຽງຈັນ**

ນະຄອນຫລວງວຽງຈັນ
ເຈົ້າຄອງນະຄອນ

ດຣ.ສິນລະວົງ ຄູດໄພທູນ